ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ກົມອາຫານແລະຢາ

ເລກທີ 333 / ກອຍ

ນະຄອນຫຼວງວຽງຈັນ, ວັນທີ 26 JAN 2016

# ແຈ້ງການ

*ເຖິງ*: ພະແນກສາທາລະສຸກແຂວງ, ນະຄອນຫຼວງ, ຂະແໜງອາຫານ ແລະ ຢາແຂວງ, ນະຄອນຫຼວງ, ເມືອງ, ຜູ້ປະກອບການທຸລະກິດຜະລິດນ້ຳດື່ມ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງ.

*ເລື່ອງ*: ແຈ້ງການກ່ຽວກັບ ການເພີ່ມຈຳນວນ ລາຍການວິໄຈນ້ຳດື່ມ ເພື່ອຕໍ່ທະບຽນໃນທຸກໆ 2 ປີ.

- ອີງຕາມ: ຂໍ້ຕົກລົງ ວ່າດ້ວຍນ້ຳດື່ມ ໃນພາສະນະບັນຈຸປິດ ສະບັບເລກທີ 585/ກຊສ, ລົງວັນທີ 12/05/2006, ມາດຕາ 4 ແລະ ມາດຕາ5.
- ອີງຕາມ: ການປ່ຽນແປງ ຂອງສະພາບແວດລ້ອມ ແລະ ການຂະຫຍາຍຕົວຂອງອຸດສະຫະກຳ ທີ່ເພີ່ມຫຼາຍຂຶ້ນໃນປະຈຸບັນ.
- ອີງຕາມ: ການຄົ້ນຄວ້າ ທາງດ້ານວິຊາການ ແລະ ການເຫັນດີ ຂອງກົມອາຫານ ແລະ ຢາ.

ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ມີຄວາມຍິນດີ ແຈ້ງມາຍັງທ່ານຊາບວ່າ: ການວິໄຈ ນ້ຳດື່ມ ເພື່ອຕໍ່ທະບຽນ ແມ່ນຈະໄດ້ວິໄຈ ຄົບຊຸດ ຕາມການກຳນົດໄວ້ໃນ ຂໍ້ຕົກລົງ ວ່າດ້ວຍນ້ຳດື່ມ ໃນພາສະນະບັນຈຸປິດ ສະບັບເລກທີ 585/ກຊສ, ລົງວັນທີ 12/05/2006, ມາດຕາ 4 ແລະ ມາດຕາ5 ເພື່ອເປັນການຕິດຕາມ ທາດເບື່ອໂລຫະໜັກທີ່ ອາດຈະປົນເປື້ອນມານຳ ແຫຼ່ງນ້ຳ ແລະ ສາມາດ ມາປົນເປື້ອນໃສ່ກັບນ້ຳດື່ມໄດ້.

ສຳລັບ ການວິໄຈ ແລະ ຕິດຕາມຄຸນນະພາບ ທຸກໆ 6 ເດືອນ ແມ່ນຍັງສືບຕໍ່ວິໄຈ 3 ລາຍ ການຕາມປົກກະຕິຄື: Coliform, Ecoli, pH.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຮ່ວມມືຈັດຕັ້ງປະຕິບັດ ຕາມແຈ້ງການສະບັບນີ້ດ້ວຍ.

ຫົວໜ້າກົມອາຫານແລະຢາ

ກົມອາຫານແລະຢາ

ດຣ.ສົມທະວີ ຈາງວີສົມມິດ